ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເລກທີ: 06 /ສພທ.ທຄຕລ
ນະຄອນຫຼວງວຽງຈັນ, ວັນທີ: 21/03/2022

ມະຕິ
ກອງປະຊຸມສະພາບໍລິຫານ ທຄຕລ ສະໄໝສາມັນ
ວັນທີ 21/03/2022

ກອງປະຊຸມສະພາບໍລິຫານຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ສະໄໝສາມັນ ຄັ້ງທີ 2 ປະຈຳປີ 2022 (ຕໍ່ໄປນີ້ຮຽກວ່າ "ກອງປະຊຸມ") ໄດ້ເປີດຂຶ້ນໃນເວລາ 14:00 ໂມງ ວັນທີ 21/03/2022 ທີ່ສຳນັກງານໃຫຍ່ ທຄຕລ, ໂດຍການເປັນປະທານຂອງ ທ່ານ ບຸນເຫຼືອ ສິນໄຊວໍຣະວົງ, ປະທານສະພາບໍລິຫານ ທຄຕລ, ມີສະມາຊິກສະພາບໍລິຫານ ແລະ ຜູ້ສັງເກດການເຂົ້າຮ່ວມ.

ກອງປະຊຸມໄດ້ປຶກສາຫາລື ແລະ ມີມະຕິຕົກລົງບາງບັນຫາສຳຄັນ ດັ່ງນີ້:

1. ຮັບຮອງຫຼັກການການສ້າງຕັ້ງບໍລິສັດ ທຄຕລ ບໍລິຫານຊັບສິນ ຈຳກັດ ເພື່ອເປັນພື້ນຖານນຳສະເໜີກອງປະຊຸມຜູ້ຖືຮຸ້ນ ທຄຕລ ພິຈາລະນາ;
2. ຮັບຮອງຜົນກວດສອບຖານະການເງິນ ທຄຕລ ປະຈຳປີ 2021 ຕາມມາດຕະຖານບັນຊີລາວ (LAS), ຮັບຮອງວິທີການພິຈາລະນາ ຜົນກວດສອບ ມາດຕະຖານສາກົນ (IFRS) ຜ່ານຈົດໝາຍວຽນ ເພື່ອນຳສະເໜີກອງປະຊຸມຜູ້ຖືຮຸ້ນພິຈາລະນາ;
- ຮັບຮອງກ່ຽວກັບການສ້າງຄັງຕ່າງໆ ປະຈຳປີ 2021 ຕາມລະບຽບການ;
3. ຮັບຮອງແຜນການປະຈຳປີ 2022 ຂອງ ທຄຕລ ເພື່ອນຳສະເໜີກອງປະຊຸມຜູ້ຖືຮຸ້ນ ທຄຕລ ພິຈາລະນາ;
4. ຮັບຮອງບໍລິສັດກວດສອບ ທຄຕລ ປະຈຳປີ 2022 ເພື່ອນຳສະເໜີກອງປະຊຸມຜູ້ຖືຮຸ້ນ ທຄຕລ ພິຈາລະນາ;
5. ຮັບຮອງແຜນການຈັດກອງປະຊຸມຜູ້ຖືຮຸ້ນ ທຄຕລ ປະຈຳປີ 2021 ດັ່ງນີ້:
- ມື້ປິດປຶ້ມບັນຊີຜູ້ຖືຮຸ້ນ: ວັນທີ 1 ເມສາ 2022 ເພື່ອກຳນົດສິດຜູ້ເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ທຄຕລ ປະຈຳປີ 2021;
- ວັນເວລາ, ສະຖານທີ່ຈັດກອງປະຊຸມ: ວັນທີ 29 ເມສາ 2022 ທີ່ ໂຮງແຮມລາວພລາຊາ;
- ຮັບຮອງເອົາວາລະກອງປະຊຸມຜູ້ຖືຮຸ້ນ ທຄຕລ ປະຈຳປີ 2021;
- ຕົກລົງບໍ່ຈ່າຍເງິນປັນຜົນ ປະຈຳປີ 2021.

ປະທານສະພາບໍລິຫານ

ບຸນເຫຼືອ ສິນໄຊວໍຣະວົງ